ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ
ສູນບໍລິຫານລັດດິຈິຕອນ

ເລກທີ 571 /ສລດ

ນະຄອນຫຼວງວຽງຈັນ, ວັນທີ 17 ສິງຫາ 2022

## ໜັງສືແຈ້ງເຊີນປະມູນ

1. ສູນບໍລິຫານລັດດິຈິຕອນ ຕາງໜ້າ ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ເຊິ່ງໄດ້ຮັບອະນຸມັດງົບປະມານການຈັດຊື້-ຈັດຈ້າງ ລະບົບການສື່ສານພາກລັດ (G-Chat) ບ້ວງຈັດຊື້ ເຄື່ອງຈັກ ແລະ ວັດຖຸອຸປະກອນ (ບ້ວງ66) ຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ ສົກປີ 2022. ໂດຍລະບົບການສື່ສານພາກລັດ (G-Chat) ແມ່ນເປັນການພັດທະນາສືບຕໍ່ຂະຫຍາຍການນຳໃຊ້. ສະນັ້ນ, ຈຶ່ງແຈ້ງເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທິ ເໝາະສົມ, ທີ່ດຳເນີນກິດຈະການດ້ານການພັດທະນາລະບົບໄອຊີທີ ເຂົ້າຮ່ວມການປະມູນ;
2. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນແບບເປີດກວ້າງທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້ - ຈັດຈ້າງ ດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ ລົງວັນທີ 13 ກຸມພາ 2019;
3. ບໍລິສັດທີ່ມີຄຸນນະວຸດທິເໝາະສົມ ແລະ ມີຄວາມສົນໃຈເຂົ້າຮ່ວມການປະມູນ ສາມາດຕິດຕໍ່ພົວພັນຊື້ເອກະສານການປະມູນຄົບຊຸດ ໄດ້ທີ່ສູນບໍລິຫານລັດດິຈິຕອນ, ກະຊວງ ເຕັກໂນໂລຊີ ແລະ ການສື່ສານ ຕັ້ງຢູ່ບ້ານ: ສີສະຫວາດ, ເມືອງ: ຈັນທະບູລີ, ນະຄອນຫຼວງວຽງຈັນ, ເບີໂທຕິດຕໍ່: 021 316600, ຂາຍຊອງປະມູນໃນລາຄາ 800,000 ກີບ (ແປດແສນກີບ) ຈ່າຍເປັນເງິນສົດ ແລະ ເງິນຈຳນວນດັ່ງກ່າວຈະບໍ່ສົ່ງຄືນ, ເລີ່ມຂາຍຊອງ ແຕ່ວັນທີ 18 ສິງຫາ 2022 ເຖິງວັນທີ 21 ກັນຍາ 2022 (ໃນວັນລັດຖະການ, ເວລາ 08:00 – 16:00 ໂມງ);
4. ຊອງປະມູນຕ້ອງສົ່ງກ່ອນເວລາ 09:00 ໂມງ ຂອງ ວັນທີ 21 ກັນຍາ 2022, ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ. ເວລາເປີດຊອງປະມູນແມ່ນ 09:30 ໂມງ ຂອງວັນດຽວກັນ ທີ່ສູນບໍລິຫານລັດດິຈິຕອນ ຫ້ອງປະຊຸມຊັ້ນ 3 (ເຂດຮົ້ວ ສນຍ) ໂດຍຊ້ອງໜ້າຄະນະກຳມະການການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ເຂົ້າຮ່ວມ;
5. ທຸກໆຊອງປະມູນຕ້ອງໄດ້ມີການຄ້ຳປະກັນທີ່ເປັນເງິນສົດ, ແຊັກເງິນສົດ (ວີຊາ) ຫຼື ໜັງສືຄ້ຳປະກັນການປະມູນຈາກທະນາຄານ ຢ່າງໜ້ອຍບໍ່ໃຫ້ຫຼຸດ 2% ຂອງລາຄາສະເໜີເຂົ້າປະມູນ.

ຮອງຫົວໜ້າສູນ

ຈິດຕະພອນ ຈັນສີລີລາດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ເຕັກໂນໂລຊີ ແລະ ການສື່ສານ

ສູນບໍລິຫານລັດດິຈິຕອນ ເລກທີ 572 /ສລດ

ນະຄອນຫລວງວຽງຈັນ, ວັນທີ 17 ສິງຫາ 2022

# ເງື່ອນໄຂແນະນຳຜູ້ເຂົ້າຮ່ວມປະມູນ

ບໍລິສັດທີ່ເຂົ້າຮ່ວມປະມູນ ການຈັດຊື້-ຈັດຈ້າງ ລະບົບການສື່ສານພາກລັດ (Government Chatting Application ຫຼື G-Chat) ຕ້ອງມີເງື່ອນໄຂ ດັ່ງລຸ່ມນີ້:

1. ໃບທະບຽນວິສາຫະກິດ;
2. ໃບອະນຸຍາດດຳເນີນທຸລະກິດທີ່ກ່ຽວກັບ ICT ຕາມລະບຽບກົດໝາຍຂອງ ສປປ ລາວ;
3. ໃບຢັ້ງຢືນເສຍພັນທະອາກອນປີ 2021 ຫຼື 2022;
4. ໃບຢັ້ງຢືນຖານະການເງິນຈາກທະນາຄານກຳນົດໄລຍະ 3 ເດືອນຍ້ອນຫຼັງຢ່າງໜ້ອຍ 300 ລ້ານກີບ (Statement);
5. ຕ້ອງມີເຊັກເງິນສົດ (VISA) ຄ້ຳປະກັນຊອງປະມູນ 2% ຂອງມູນຄ່າທີ່ສະເໜີ;
6. ປະສົບການ ຢ່າງໜ້ອຍ 2 ປີ ຫຼື ສັນຍາທີ່ໄດ້ເຊັນຜ່ານມາ ຕິດພັນກັບການອອກແບບ, ຕິດຕັ້ງ ແລະ ດຳເນີນການພັດທະນາລະບົບການສື່ສານຂອງພາກລັດ (Government Chatting Application ຫຼື G-Chat) ເປັນຕົ້ນແມ່ນ:
   - ສະໜອງ Platform ລວມທັງລະບົບຮາດແວ ແລະ ຊອບແວ ທີ່ກ່ຽວຂ້ອງກັບການພັດທະນາລະບົບການສື່ສານຂອງພາກລັດ (Government Chatting Application ຫຼື G-Chat);
   - ສະໜອງລະບົບການສື່ສານຂອງພາກລັດ (Government Chatting Application ຫຼື G-Chat) ຫຼື ລະບົບອື່ນໆ ທີ່ກ່ຽວຂ້ອງ;
7. ຕ້ອງປະກອບເອກະສານປະມູນຕາມແບບຟອມສະເໜີລາຄາທີ່ເຈົ້າຂອງໂຄງການກຳນົດໃຫ້ຄົບຖ້ວນ (ມູນຄ່າສະເໜີແມ່ນລວມຄ່າພາສີ, ອາກອນ ແລະ ຄ່າທຳນຽມຕ່າງໆ);
8. ລາຄາຊອງປະມູນແມ່ນ 800,000 ກີບ/ຊອງ.

ດັ່ງນັ້ນ, ຈຶ່ງກຳນົດເງື່ອນໄຂ ແນະນຳຜູ້ທີ່ຈະເຂົ້າຮ່ວມການປະມູນລາຄາຂ້າງເທິງນັ້ນ.

ຮອງຫົວໜ້າສູນ

ກະຊວງເຕັກໂນໂລຊີ ແລະ ການສື່ສານ ສູນບໍລິຫານລັດດິຈິຕອນ

ຈິດຕະພອນ ຈັນສີລິລາດ